ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 898 /ກຄທ
ນະຄອນຫຼວງວຽງຈັນ, ວັນທີ 14 ພະຈິກ 2018

## ຄໍາແນະນໍາການຈັດຕັ້ງປະຕິບັດ
## ຂໍ້ຕົກລົງ ວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານ

- ອີງຕາມຂໍ້ຕົກລົງ ວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານ ສະບັບເລກທີ 512/ທຫລ, ລົງວັນທີ 29 ມິຖຸນາ 2018;
- ອີງຕາມຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 955/ທຫລ, ລົງວັນທີ 7 ພະຈິກ 2013.

ເພື່ອຮັບປະກັນທະນາຄານທຸລະກິດທົ່ວລະບົບ ຈັດຕັ້ງປະຕິບັດຂໍ້ຕົກລົງ ວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານ ສະບັບເລກທີ 512/ທຫລ, ລົງວັນທີ 29 ມິຖຸນາ 2018 ຊຶ່ງຕໍ່ໄປນີ້ເອີ້ນວ່າ ຂໍ້ຕົກລົງເລກທີ 512, ໃຫ້ມີຄວາມເປັນເອກະພາບ, ຖືກຕ້ອງ ແລະ ອໍານວຍຄວາມສະດວກໃຫ້ແກ່ການກວດກາ ຂອງກົມຄຸ້ມຄອງທະນາຄານທຸລະກິດ.

## ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ
## ອອກຄໍາແນະນໍາການຈັດຕັ້ງປະຕິບັດ ດັ່ງນີ້:

1. ຄູ່ມືບໍລິຫານສິນເຊື່ອ:
   - 1.1. ການສ້າງຄູ່ມືບໍລິຫານສິນເຊື່ອຂອງທະນາຄານທຸລະກິດ ຕ້ອງເຮັດເປັນຄູ່ມືດຽວ, ສໍາລັບຄູ່ມືສິນເຊື່ອທີ່ແຍກກັນ ແມ່ນໃຫ້ສັງລວມເຂົ້າເປັນຄູ່ມືອັນດຽວ ໂດຍຕ້ອງຮັບປະກັນຄວາມສອດຄ່ອງກັບເນື້ອໃນມາດຕາ 4 ແລະ 5 ຂອງຂໍ້ຕົກລົງເລກທີ 512;
   - 1.2. ສໍາລັບທະນາຄານທຸລະກິດ ຄູ່ມື ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານ ຫຼື ຕາມການມອບໝາຍຂອງສະພາບໍລິຫານ ຕາມທີ່ກໍານົດໄວ້ໃນກົດລະບຽບຂອງທະນາຄານ. ສໍາລັບສາຂາທະນາຄານທຸລະກິດຕ່າງປະເທດ ສາມາດນໍາໃຊ້ຄູ່ມືຂອງສໍານັກງານໃຫຍ່ ທີ່ຜ່ານການຮັບຮອງຂອງສະພາບໍລິຫານ ແຕ່ຕ້ອງມີເງື່ອນໄຂດັ່ງນີ້: ແປເປັນພາສາລາວຢ່າງຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍຂອງ ສປປ ລາວ, ໃນກໍລະນີບໍ່ສອດຄ່ອງ ແມ່ນຕ້ອງໄດ້ປັບປຸງເປັນຄູ່ມືສະເພາະຂອງສາຂາ ແຕ່ຕ້ອງຖືກຮັບຮອງຈາກຜູ້ທີ່ມີສິດອໍານາດກ່ຽວຂ້ອງ ຕາມລະບຽບການຂອງສໍານັກງານໃຫຍ່.
2. ລະບົບການຈັດອັນດັບສິນເຊື່ອພາຍໃນ:



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

2.1. ກໍລະນີສາຂາທະນາຄານທຸລະກິດຕ່າງປະເທດ ສາມາດນໍາໃຊ້ລະບົບຂອງສໍານັກງານໃຫຍ່ ທີ່ຜ່ານການຮັບຮອງຂອງສະພາບໍລິຫານ ແຕ່ຕ້ອງມີເງື່ອນໄຂດັ່ງນີ້: ຕ້ອງສອດຄ່ອງຕາມລະບຽບກົດໝາຍຂອງ ສປປ ລາວ, ໃນກໍລະນີບໍ່ສອດຄ່ອງ ແມ່ນຕ້ອງໄດ້ປັບປຸງ ຫຼື ສາມາດສ້າງເປັນລະບົບສະເພາະຂອງສາຂາ ຊຶ່ງລະບົບດັ່ງກ່າວຕ້ອງຖືກຮັບຮອງຈາກຜູ້ທີ່ມີສິດອໍານາດກ່ຽວຂ້ອງ ຕາມລະບຽບການຂອງສໍານັກງານໃຫຍ່.

2.2. ລະບົບການຈັດອັນດັບສິນເຊື່ອພາຍໃນ ສາມາດເປັນລະບົບດຽວແບບລວມສູນ ຫຼື ແຍກເປັນລະບົບຍ່ອຍ ເຊັ່ນ: ລະບົບຈັດອັນດັບສິນເຊື່ອ ທີ່ໃຊ້ໃນການອະນຸມັດສິນເຊື່ອ, ລະບົບທີ່ໃຊ້ໃນການບໍລິຫານຄຸນນະພາບສິນເຊື່ອ ແລະ ໃນການຫັກເງິນແຮ. ໃນນັ້ນ, ຕ້ອງສອດຄ່ອງກັບ ຂໍ້ກໍານົດການຈັດຊັ້ນ ແລະ ການຫັກເງິນແຮ ທີ່ກໍານົດໄວ້ໃນຂໍ້ຕົກລົງເລກທີ 512.

3. ໃນກໍລະນີທີ່ ເງິນກູ້ບ້ວງໃດໜຶ່ງ ທີ່ມີການຄ້າງຊໍາລະ ແລ້ວພາໃຫ້ມີການປ່ຽນແປງຊັ້ນໜີ້ ເປັນຕົ້ນ ຈາກ A ເປັນ B, A ເປັນ C, C ເປັນ D ແລະອື່ນໆ, ພາຍຫຼັງລູກໜີ້ໄດ້ມາຊໍາລະຍອດຄ້າງຊໍາລະທັງໝົດ ໃຫ້ທະນາຄານທົບທວນຈັດຊັ້ນໜີ້ບ້ວງດັ່ງກ່າວຄືນໃໝ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງເລກທີ 512 ຄື ສາມາດຈັດເປັນຊັ້ນປົກກະຕິ ຫຼື ຊັ້ນອື່ນໆ ຕາມເງື່ອນໄຂດ້ານຄຸນນະພາບ.

4. ການຈັດຊັ້ນພາລະຜູກພັນທາງການເງິນ ແມ່ນເພື່ອຕິດຕາມຄວາມສ່ຽງໃນອະນາຄົດຂອງທະນາຄານ. ໃນນັ້ນ, ທະນາຄານ ບໍ່ມີພັນທະຫັກເງິນແຮສໍາລັບພາລະຜູກພັນທາງການເງິນ. ເຖິງຢ່າງໃດກໍຕາມ ພາລະຜູກພັນທີ່ທະນາຄານໄດ້ປະຕິບັດໄປແລ້ວ ແມ່ນໃຫ້ມີການຈັດຊັ້ນ ແລະ ຫັກເງິນແຮ ຕາມທີ່ກໍານົດໄວ້ໃນມາດຕາ 10 ວັກ 2 , ມາດຕາ 16 ແລະ 17 ຂອງຂໍ້ຕົກລົງເລກທີ 512.

5. ພາກສ່ວນອະນຸມັດການປັບປຸງໂຄງສ້າງເງິນກູ້:

5.1. ໃຫ້ທະນາຄານ ມີຄະນະ ຫຼື ພາກສ່ວນອະນຸມັດທຸກການປັບປຸງໂຄງສ້າງເງິນກູ້ ຊຶ່ງຄະນະ ຫຼື ພາກສ່ວນດັ່ງກ່າວ ຕ້ອງໄດ້ຮັບການຮັບຮອງ ແລະ ລາຍງານໂດຍກົງຕໍ່ສະພາບໍລິຫານ, ຄະນະ ຫຼື ພາກສ່ວນດັ່ງກ່າວ ຕ້ອງແຍກອອກຈາກພາກສ່ວນທີ່ຕິດພັນກັບການອະນຸມັດເງິນກູ້.

5.2. ການພິຈາລະນາອະນຸມັດປັບປຸງໂຄງສ້າງເງິນກູ້ ແມ່ນໃຫ້ປະຕິບັດຕາມເງື່ອນໄຂທີ່ກໍານົດໄວ້ໃນມາດຕາ 13 ແລະ ຈັດຊັ້ນໃນມາດຕາ 14 ຂອງຂໍ້ຕົກລົງເລກທີ 512.

6. ສໍາລັບການປັບປຸງສັນຍາເງິນກູ້ ເພື່ອໃຫ້ສອດຄ່ອງກັບກະແສເງິນສົດຂອງລູກໜີ້ ນອກຈາກທີ່ກໍານົດໄວ້ໃນມາດຕາ 13 ວັກ 2 ຂອງຂໍ້ຕົກລົງເລກທີ 512, ເງິນກູ້ ທີ່ຖືກຈັດຊັ້ນເປັນໜີ້ປົກກະຕິ ແລະ ບໍ່ມີວັນຄ້າງຊໍາລະ ແມ່ນສາມາດປັບປຸງໄດ້ເກີນ 2 ຄັ້ງ ຕາມຄວາມເໝາະສົມ.

7. ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນ:

7.1. ເງິນກູ້ທີ່ໄດ້ຫັກເງິນແຮ ຕາມຂໍ້ຕົກລົງເລກທີ 324/ທຫລ ທີ່ມີການຫັກເກີນອັດຕາສ່ວນເງິນແຮທີ່ກໍານົດໄວ້ ຕາມຂໍ້ຕົກລົງເລກທີ 512, ທະນາຄານ ຕ້ອງເກັບຄືນເງິນແຮດັ່ງກ່າວ ແລ້ວຫັກເງິນແຮຕາມອັດຕາສ່ວນທີ່ກໍານົດໄວ້ໃນມາດຕາ 16 ແລະ 17 ຂອງຂໍ້ຕົກລົງເລກທີ 512. ໃນກໍລະນີທີ່ທະນາຄານຕ້ອງການຫັກເງິນແຮທີ່ເຂັ້ມງວດກວ່າ ຫຼື ສູງກວ່າອັດຕາສ່ວນກໍານົດໄວ້ໃນຂໍ້ຕົກລົງເລກທີ 512 ແມ່ນທະນາຄານ ຕ້ອງປະຕິບັດຕາມເງື່ອນໄຂ ທີ່ກໍານົດໄວ້ໃນມາດຕາ 18 ຂອງຂໍ້ຕົກລົງເລກທີ 512.